**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ຫ້ອງການ — ເລກທີ /ຫກຊ

ນະຄອນຫຼວງວຽງຈັນ, ວັນທີ ເມສາ 2017

# ແຈ້ງເຕືອນໄພ

**ເຖິງ:** ບັນດາ ກະຊວງ, ທະນາຄານ, ບໍລິສັດໂທລະຄົມມະນາຄົມ, ອົງການຈັດຕັ້ງຕ່າງໆ ແລະ ຜູ້ຊົມໃຊ້ອິນເຕີເນັດໃນຂອບເຂດທົ່ວປະເທດ.

**ເລື່ອງ:** ແຈ້ງເຕືອນລະວັງໄພຄຸກຄາມ ທາງລະບົບຄອມພິວເຕີ.

- ອີງຕາມ ກົດໝາຍວ່າດ້ວຍ ການຕ້ານ ແລະ ສະກັດກັ້ນອາຊະຍາກຳ ທາງລະບົບຄອມພິວເຕີ ສະບັບເລກທີ 61/ສພຊ, ລົງວັນທີ 15 ກໍລະກົດ 2016.

ຫ້ອງການ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຂໍແຈ້ງເຕືອນໄພຄຸກຄາມທາງລະບົບຄອມພິວເຕີ ມາຍັງຂະແໜງການຕ່າງໆທີ່ຊົມໃຊ້ອິນເຕີເນັດໃນຂອບເຂດທົ່ວປະເທດ ເພື່ອຊາບ ດັ່ງລາຍລະອຽດລຸ່ມນີ້:

1. ປັດຈຸບັນໄດ້ພົບເຫັນໄພຄຸກຄາມທາງລະບົບ ເຕັກໂນໂລຊີ ສື່ສານ-ຂໍ້ມູນຂ່າວສານ ເກີດຂຶ້ນຢູ່ທັງ ພາຍໃນ ແລະ ຕ່າງປະເທດ ຊຶ່ງກຸ່ມຄົນບໍ່ຫວັງດີ ໄດ້ສວຍໃຊ້ຫຼາຍຮູບແບບເພື່ອຕົວະຍົວະຫຼອກລວງ, ເອີ້ນໄຖ່ເອົາເງິນ, ແຮັກເອົາຂໍ້ມູນ, ສ້າງຄວາມເສຍຫາຍຕໍ່ລະບົບຄອມພິວເຕີ ແລະ ອື່ນໆ ເຊັ່ນ: ການສົ່ງຂໍ້ມູນຜ່ານໃນລະບົບໂທລະສັບ, ສື່ສັງຄົມອອນລາຍ, ອີເມລ ຫຼື ມີເບີແປກໆຈາກຕ່າງປະເທດໂທເຂົ້າໂທລະສັບມືຖື, ການສົ່ງໄວຣັດຊະນິດໃໝ່ເຂົ້າສູ່ລະບົບຄອມພິວເຕີ ແລະ ອື່ນໆ ຊຶ່ງອາດຈະສ້າງຄວາມເສຍຫາຍຕໍ່ລະບົບຂອງທ່ານ, ຮູບການຂອງໄພຄຸກຄາມ ແມ່ນມີລັກສະນະຂົ່ມຂູ່, ຫຼອກລວງ, ຊວນເຊື່ອ, ເອີ້ນໄຖ່ເອົາເງິນ ແລະ ອື່ນໆ.
2. ຖ້າຫາກຂະແໜງການໃດ ພົບເຫັນເຫດການດັ່ງກ່າວ ແມ່ນສະເໜີໃຫ້ແຈ້ງຫາ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, ສູນສະກັດກັ້ນ ແລະ ແກ້ໄຂເຫດສຸກເສີນທາງຄອມພິວເຕີ ຫຼື ສູນລາວເຊີດ ເພື່ອຈະໄດ້ກວດກາຫາແຫຼ່ງທີ່ມາຂອງຂໍ້ມູນ, ເກັບກຳສະຖິຕິໄພຄຸກຄາມທາງລະບົບຄອມພິວເຕີ ແລະ ອື່ນໆ.
3. ເພື່ອຫຼຸດຜ່ອນຜົນເສຍຫາຍທີ່ອາດຈະເກີດຂຶ້ນກັບລະບົບຄອມພິວເຕີຂອງທ່ານ, ຫ້ອງການ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຂໍແຈ້ງໃຫ້ທ່ານຊາບວ່າ ສູນສະກັດກັ້ນ ແລະ ແກ້ໄຂເຫດສຸກເສີນທາງຄອມພິວເຕີ ມີຄວາມຍິນດີ ປຶກສາຫາລື, ແລກປ່ຽນບົດຮຽນ, ໃຫ້ຄຳແນະນຳ ແລະ ຊ່ວຍກວດຊ່ອງໂຫວ່ລະບົບເຄືອຂ່າຍຄອມພິວເຕີ, ເຊີເວີ, ເວັບໄຊ ເພື່ອໃຫ້ມີຄວາມພ້ອມໃຊ້ງານ ແລະ ຮັບປະກັນຄວາມປອດໄພ. ສອບຖາມຂໍ້ມູນເພີ່ມເຕີມຕິດຕໍ່ ສູນລາວເຊີດ ເບີໂທ 030-5764222, Email: report@laocert.gov.la

ດັ່ງນັ້ນ, ຈຶ່ງແຈ້ງເຕືອນໄພມາຍັງຂະແໜງການຕ່າງໆ ເພື່ອຊາບ, ມີສະຕິ ແລະ ປ້ອງກັນໃຫ້ປອດໄພດ້ວຍ.

**ຮ.ກ ຫົວໜ້າ ຫ້ອງການ**

ຫ້ອງການ

**ສາຍຝົນ ບຸດຈັນທະລາດ**